# ສາລະບານ

ໝວດທີ 1 ບົດບັນຍັດທົ່ວໄປ ....1
ມາດຕາ 1 ຈຸດປະສົງ....1
ມາດຕາ 2 ຢາງພາລາ....1
ມາດຕາ 3 ການອະທິບາຍຄຳສັບ ....1
ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານຢາງພາລາ....2
ມາດຕາ 5 ຫຼັກການກ່ຽວກັບວຽກງານຢາງພາລາ ....2
ມາດຕາ 6 ຂອບເຂດການນຳໃຊ້....3
ໝວດທີ 2 ການຄຸ້ມຄອງຢາງພາລາ ....3
ມາດຕາ 7 ການຄຸ້ມຄອງຢາງພາລາ ....3
ມາດຕາ 8 ການເກັບກຳຂໍ້ມູນ ຢາງພາລາ....3
ມາດຕາ 9 ການຂຶ້ນທະບຽນປ່າປູກ ແລະ ຢັ້ງຢືນ ໄມ້ຢາງພາລາ ....3
ມາດຕາ 10 ການຂີດຢາງພາລາ ແລະ ຕັດໄມ້ຢາງພາລາ ....3
ມາດຕາ 11 ການຊື້ ຂາຍ ຢາງພາລາ ແລະ ໄມ້ຢາງພາລາ....4
ມາດຕາ 12 ການເຄື່ອນຍ້າຍ ຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນ ຢາງພາລາ....4
ມາດຕາ 13 ມາດຕະຖານ ຜະລິດຕະພັນ ຢາງພາລາ....4
ມາດຕາ 14 ການຄົ້ນຄວ້າທົດລອງ ຢາງພາລາ ....4
ມາດຕາ 15 ການຄຸ້ມຄອງໂຮງງານປຸງແຕ່ງຢາງພາລາ....4
ມາດຕາ 16 ຄະນະກຳມະການຄຸ້ມຄອງຢາງພາລາ ຂັ້ນສູນກາງ ....5
ໝວດທີ 3_ການປົກປັກຮັກສາຢາງພາລາ
ມາດຕາ 17 ການປົກປັກຮັກສາຢາງພາລາ....5
ມາດຕາ 18 ການປົກປັກຮັກສາ ແຫຼ່ງແນວພັນຢາງພາລາ ....5
ມາດຕາ 19 ການກັນ ແລະ ການຕ້ານ ພະຍາດໄມ້, ບົ້ງແມງ, ສັດຕູພືດອື່ນ ຢາງພາລາ....5
ມາດຕາ 20 ການສະກັດກັ້ນ ແລະ ຕ້ານ ໄຟໄໝ້ ປ່າປູກຢາງພາລາ ....6
ໝວດທີ 4 ການພັດທະນາຢາງພາລາ
ມາດຕາ 21 ການພັດທະນາຢາງພາລາ ....6
ມາດຕາ 22 ການກຳນົດເນື້ອທີ່ດິນປູກຢາງພາລາ ....6
ມາດຕາ 23 ການສົ່ງເສີມການປູກ ຢາງພາລາ ....6
ມາດຕາ 24 ການພັດທະນາ ກຸ່ມຜະລິດ, ສະຫະກອນ ແລະ ສະມາຄົມຢາງພາລາ....7
ມາດຕາ 25 ຂໍ້ມູນ ຂ່າວສານຢາງພາລາ ....7

ໝວດທີ 5 ການນຳໃຊ້, ສິດ ແລະ ພັນທະ ຂອງຜູ້ນຳໃຊ້ ຢາງພາລາ....8

ມາດຕາ 26 ການນຳໃຊ້ ຢາງພາລາ ແລະ ໄມ້ ຢາງພາລາ....8

ມາດຕາ 27 ສິດ ຂອງຜູ້ນຳໃຊ້ ຢາງພາລາ ແລະ ທີ່ດິນປູກ ຢາງພາລາ....8

ມາດຕາ 28 ພັນທະຂອງຜູ້ນຳໃຊ້ ຢາງພາລາ....8

ໝວດທີ 6 ທຸລະກິດ ແລະ ການດຳເນີນທຸລະກິດ ກ່ຽວກັບຢາງພາລາ....9

ມາດຕາ 29 ທຸລະກິດ ກ່ຽວກັບຢາງພາລາ....9

ມາດຕາ 30 ການຜະລິດແນວພັນ ແລະ ເບ້ຍຢາງພາລາ....9

ມາດຕາ 31 ການປູກໄມ້ຢາງພາລາ....9

ມາດຕາ 32 ການປຸງແຕ່ງຢາງພາລາ....9

ມາດຕາ 33 ການສົ່ງອອກ ແນວພັນຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນ ຢາງພາລາ....10

ມາດຕາ 34 ການນຳເຂົ້າ ແລະ ສົ່ງຜ່ານ ແນວພັນຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນ ຢາງພາລາ....10

ມາດຕາ 35 ການຄ້າ ຂາຍ ກາກບອນ ຈາກປ່າປູກໄມ້ຢາງພາລາ....10

ມາດຕາ 36 ການ ຄ້າຂາຍຢາງພາລາ....11

ມາດຕາ 37 ການດຳເນີນທຸລະກິດກ່ຽວກັບ ຢາງພາລາ....11

ມາດຕາ 38 ເງື່ອນໄຂໃນການດຳເນີນທຸລະກິດ ກ່ຽວກັບຢາງພາລາ....11

ມາດຕາ 39 ການໂຈະດຳເນີນທຸລະກິດ ກ່ຽວກັບຢາງພາລາ....11

ມາດຕາ 40 ການຍົກເລີກການດຳເນີນທຸລະກິດ ກ່ຽວກັບຢາງພາລາ....12

ມາດຕາ 41 ການສະເໜີ ຕໍ່ການໂຈະ ຫຼື ການຍົກເລີກ ການດຳເນີນທຸລະກິດ ກ່ຽວກັບຢາງພາລາ....12

ໝວດທີ 7 ຂໍ້ຫ້າມ

ມາດຕາ 42 ຂໍ້ຫ້າມທົ່ວໄປ....12

ມາດຕາ 43 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດຢາງພາລາ....12

ມາດຕາ 44 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່....13

ໝວດທີ 8 ການຄຸ້ມຄອງ ແລະ ກວດກາ ວຽກງານ ຢາງພາລາ

ມາດຕາ 45 ອົງການຄຸ້ມຄອງ ແລະ ກວດກາ ວຽກງານຢາງພາລາ....13

ມາດຕາ 46 ສິດ ແລະ ໜ້າທີ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ....13

ມາດຕາ 47 ສິດ ແລະ ໜ້າທີ່ ຂອງ ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ....14

ມາດຕາ 48 ສິດ ແລະ ໜ້າທີ່ ຂອງ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ..... 15

ມາດຕາ 49 ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກ ສ່ວນອື່ນ ທີ່ກ່ຽວຂ້ອງ ..... 16

ມາດຕາ 50 ເນື້ອໃນການກວດກາ ວຽກງານປາງພາລາ ..... 16

ມາດຕາ 51 ຮູບການການກວດກາ ..... 16

ໝວດທີ 9 ງົບປະມານນຳໃຊ້ໃນວຽກງານປາງພາລາ

ມາດຕາ 52 ແຫຼ່ງລາຍຮັບ ..... 16

ມາດຕາ 53 ການຄຸ້ມຄອງ ແລະ ການນຳໃຊ້ງົບປະມານ ..... 17

ໝວດທີ 10 ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ ..... 17

ມາດຕາ 54 ນະໂຍບາຍຕໍ່ຜູ້ມີຜົນງານ ..... 17

ມາດຕາ 55 ມາດຕະການຕໍ່ຜູ້ລະເມີດ ..... 17

ໝວດທີ 11 ບົດບັນຍັດສຸດທ້າຍ

ມາດຕາ 56 ການຈັດຕັ້ງປະຕິບັດ ..... 17

ມາດຕາ 57 ຜົນສັກສິດ ..... 17

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ /ລບ

ນະຄອນຫຼວງວຽງຈັນ, ວັນທີ

# (ຮ່າງ) ດຳລັດ
# ວ່າດ້ວຍ ຢາງພາລາ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ /ກສ, ລົງວັນທີ..

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ ຕິດຕາມ ກວດກາ ວຽກງານຢາງພາລາ ເພື່ອສົ່ງເສີມວຽກດັ່ງກ່າວ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ ຮັບປະກັນ ການຜະລິດ ແລະ ການສະໜອງຢາງພາລາ ໃຫ້ ແກ່ໂຮງງານ ແລະ ຕະຫຼາດ ສາມາດເຊື່ອມໂຍງກັບ ພາກພື້ນ ແລະ ສາກົນ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນ, ເພີ່ມຄວາມປົກຫຸ້ມຂອງ ປ່າໄມ້ ປະກອບສ່ວນ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ຢາງພາລາ**

ຢາງພາລາ ແມ່ນຜົນຜະລິດ ທີ່ໄດ້ຈາກຕົ້ນຢາງພາລາ ຊຶ່ງປະກອບດ້ວຍ ນ້ຳຢາງສົດ, ຢາງກ້ອນຖ້ວຍ ລວມທັງ ໄມ້ຢາງພາລາ ເພື່ອປຸງແຕ່ງເປັນຜະລິດຕະພັນ ຈຳໜ່າຍ ພາຍໃນ ແລະ ສົ່ງອອກຕ່າງປະເທດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນ ດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຕົ້ນຢາງ** ໝາຍເຖິງ ຕົ້ນໄມ້ຢາງພາລາ (*Hevea brasiliensis*) ທີ່ໃຫ້ຢາງ;

2. **ຜະລິດຕະພັນຢາງພາລາ** ໝາຍເຖິງ ຢາງພາລາ ທີ່ຜ່ານຂະບວນການປຸງແຕ່ງ ເປັນຜະລິດຕະ ພັນເຄິ່ງສຳເລັດຮູບ ແລະ ສຳເລັດຮູບ ເຊັ່ນ ຢາງກ້ອນອັດແໜ້ນ, ຢາງແຜ່ນຮົມຄວັນ ແລະ ຮູບແບບຜະລິດຕະພັນ ອື່ນ;

3. **ແນວພັນຢາງພາລາ ທີ່ເປັນບູລິມະສິດ** ໝາຍເຖິງ ແນວພັນ ທີ່ຊຸກຍູ້ສົ່ງເສີມໃຫ້ປູກ ຊຶ່ງເປັນແນວພັນທີ່ມີຄວາມແທດເໝາະກັບ ສະພາບດິນຟ້າອາກາດ ຢູ່ຕາມເຂດແຄວ້ນຕ່າງໆຂອງ ສປປ ລາວ ແລະ ໃຫ້ຜົນຜະລິດສູງ;

4. **ຕົ້ນໄມ້ຢາງທີ່ໝົດອາຍຸການຂີດຢາງ** ໝາຍເຖິງ ຕົ້ນຢາງທີ່ມີ ອາຍຸ 25 ປີ ຂຶ້ນໄປ ຫຼື ການໃຫ້ນໍ້າຢາງໜ້ອຍບໍ່ກຸ້ມຄ່າຕໍ່ການຂີດ;

5. **ລານທ້ອນໂຮມຢາງພາລາ** ໝາຍເຖິງ ສະຖານທີ່ເກັບທ້ອນໂຮມຢາງພາລາສຳລັບເກັບຊື້ ຂາຍ;

6. **ໂຮງງານປຸງແຕ່ງຢາງພາລາ** ໝາຍເຖິງ ສະຖານທີ່ ນຳເອົານໍ້າຢາງສົດ, ຢາງກ້ອນຖ້ວຍ ມາປຸງແຕ່ງໃຫ້ເປັນຢາງແຜ່ນສົດ, ຜະລິດຕະພັນ ເຄິ່ງສຳເລັດຮູບ ແລະ ສຳເລັດຮູບ;

7. **ສະມາຄົມຢາງພາລາລາວ** ໝາຍເຖິງ ອົງການຈັດຕັ້ງທາງສັງຄົມ ທີ່ສົ່ງເສີມການພັດທະນາຢາງພາ ລາ ຕາມທິດສີຂຽວ ແລະ ຍືນຍົງ, ປົກປ້ອງສິດ ແລະ ຜົນປະໂຫຍດ ຂອງສະມາຊິກ ຜູ້ຜະລິດ ຜູ້ປະກອບການ ໃນການຜະລິດ, ປຸງແຕ່ງ, ການຄ້າຂາຍ, ການນຳເຂົ້າ ແລະ ສົ່ງອອກ;

8. **ກຸ່ມຜະລິດ** ໝາຍເຖິງ ການຈັດຕັ້ງລວມໝູ່ຂອງປະຊາຊົນລາວ ທີ່ມີອາຊີບກະສິກຳ, ຫັດຖະກຳ, ຄ້າ ຂາຍ, ບໍລິການ ຫຼື ອາຊີບອື່ນ ທີ່ສ້າງຕັ້ງຂຶ້ນ ດ້ວຍຄວາມສະໝັກໃຈ ເພື່ອຊ່ວຍເຫຼືອ ຊຶ່ງກັນ ແລະ ກັນລະຫວ່າງສະມາຊິກ ແລະ ຄອບຄົວສະມາຊິກດ້ວຍກັນທາງດ້ານການຜະລິດ ແລະ ການບໍລິການ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານຢາງພາລາ**

ລັດ ຊຸກຍູ້ ບຸກຄົນ ປູກຢາງພາລາ ໃນເຂດທີ່ລັດໄດ້ຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ແລະ ຊຸກຍູ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປູກຢາງພາລາ ໃສ່ທີ່ດິນກະສິກຳ ເຂດທີ່ໄດ້ຈັດສັນການນຳໃຊ້ ສຳລັບທີ່ດິນປູກຕົ້ນໄມ້ໃຫ້ໝາກ ຫຼື ພືດອາຍຸຍາວ ທີ່ໄດ້ຮັບສິດນຳໃຊ້ທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍ ເພື່ອສ້າງລາຍຮັບ, ເປັນສິນຄ້າ ແລະ ເປັນວັດຖຸດິບສະໜອງໃຫ້ແກ່ການປຸງແຕ່ງ ດ້ວຍການວາງນະໂຍບາຍທີ່ ເໝາະສົມ ເຊັ່ນ ການຮັບຮູ້ ແລະ ປົກປ້ອງສິດຜົນປະໂຫຍດ, ການບໍລິການທາງດ້ານເຕັກນິກວິຊາການ, ນະໂຍບາຍດ້ານ ສິນເຊື່ອ, ຍົກເວັ້ນ ຄ່າບູລະນະປ່າໄມ້ ແລະ ຄ່າຊົບພະຍາກອນປ່າໄມ້, ສາມາດໂອນສືບທອດ, ເປັນຫຼັກຊັບຄໍ້າປະກັນ ແລະ ນະໂຍບາຍອື່ນຕາມກົດໝາຍ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານຢາງພາລາ**

ວຽກງານຢາງພາລາ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຍຸດທະສາດປ່າໄມ້;

2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;

3. ຮັບປະກັນການສະໜອງ ວັດຖຸດິບ ໃຫ້ແກ່ໂຮງງານປຸງແຕ່ງ ຕາມຄວາມຕ້ອງການຂອງຕະຫຼາດ;

4. ຮັບປະກັນການນຳໃຊ້ຢາງພາລາ ໃຫ້ເກີດຜົນປະໂຫຍດສູງສຸດ, ບໍ່ສ້າງຜົນກະທົບອັນບໍ່ດີຕໍ່ຄຸນນະພາບດິນ, ນໍ້າ, ສິ່ງແວດລ້ອມ ແລະ ເສດຖະກິດ-ສັງຄົມ;

5. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ຢາງພາລາ ຢ່າງກົມກຽວ ແລະ ມີປະສິດທິຜົນ ໂດຍການມີສ່ວນຮ່ວມຂອງປະຊາຊົນ ຢ່າງຕັ້ງໜ້າ;

6. ສອດຄ່ອງກັບ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

**ມາດຕາ 6 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານຢາງພາລາ ຢູ່ ສປປ ລາວ.

## ໝວດທີ 2
## ການຄຸ້ມຄອງຢາງພາລາ

**ມາດຕາ 7 ການຄຸ້ມຄອງຢາງພາລາ**

ການຄຸ້ມຄອງຢາງພາລາ ປະກອບດ້ວຍ ກິດຈະການ ດັ່ງນີ້:

1. ການເກັບກຳຂໍ້ມູນ ຢາງພາລາ;
2. ການຂຶ້ນທະບຽນປ່າປູກ ແລະ ຢັ້ງຢືນ ໄມ້ຢາງພາລາ;
3. ການຂີດຢາງພາລາ ແລະ ຕັດໄມ້ຢາງພາລາ;
4. ການຊື້ ຂາຍ ຢາງພາລາ ແລະ ໄມ້ຢາງພາລາ;
5. ການເຄື່ອນຍ້າຍ ຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນຢາງພາລາ;
6. ມາດຕະຖານ ຜະລິດຕະພັນ ຢາງພາລາ;
7. ການຄົ້ນຄວ້າທົດລອງ ຢາງພາລາ;
8. ການຄຸ້ມຄອງໂຮງງານປຸງແຕ່ງຢາງພາລາ.

**ມາດຕາ 8 ການເກັບກຳຂໍ້ມູນ ຢາງພາລາ**

ການເກັບກຳຂໍ້ມູນ ຢາງພາລາ ແມ່ນ ເກັບກຳສະຖິຕິ ການປູກ, ການຂຶ້ນທະບຽນ, ການຂີດຢາງ, ການຕັດໄມ້, ການປຸງແຕ່ງ, ການສົ່ງອອກ ແລະ ການນຳເຂົ້າ ຢາງພາລາ ນຳ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ເກັບເກັບຮັກສາໄວ້ໃນລະບົບຖານຂໍ້ມູນ ດ້ວຍຮູບແບບເອເລັກໂຕຣນິກ ແລະ ໃນຮູບແບບເຈ້ຍ.

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ສ້າງ, ປັບປຸງ, ຄຸ້ມຄອງ ແລະ ນຳໃຊ້ ຂໍ້ມູນ ກ່ຽວກັບຢາງພາລາ ລວມທັງ ສະໜອງ ແລະ ແລກປ່ຽນຂໍ້ມູນດັ່ງກ່າວ ໂດຍສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 9 ການຂຶ້ນທະບຽນປ່າປູກ ແລະ ຢັ້ງຢືນ ໄມ້ຢາງພາລາ**

ປ່າປູກ ຢາງພາລາ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ້ອງໄດ້ຂຶ້ນທະບຽນປ່າປູກ ນຳຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເພື່ອຢັ້ງຢືນກຳມະສິດ ແລະ ແຫຼ່ງທີ່ມາຂອງ ນ້ຳຢາງ ແລະ ໄມ້ຢາງພາລາທີ່ປູກ, ອຳນວຍຄວາມສະດວກໃນການ ຄຸ້ມຄອງ, ປົກປັກຮັກສາ ແລະ ປະຕິບັດນະໂຍບາຍສົ່ງເສີມການປູກຕາມກົດໝາຍ.

ສຳລັບ ຂັ້ນຕອນ ແລະ ລາຍລະອຽດ ການຂຶ້ນທະບຽນປ່າປູກ ແລະ ຢັ້ງຢືນໄມ້ປູກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 10 ການຂີດຢາງພາລາ ແລະ ຕັດໄມ້ຢາງພາລາ**

ການຂີດຢາງພາລາ ສາມາດຂີດໄດ້ ພາຍຫຼັງຕົ້ນຢາງ ມີອາຍຸ 6 ປີ ຂຶ້ນໄປ ແລະ ເຈົ້າຂອງສວນຢາງສາມາດຂີດໄດ້ ໂດຍບໍ່ຈຳເປັນ ຂໍອະນຸຍາດ ຕາມຂັ້ນຕອນທາງດ້ານວິຊາການ ແຕ່ລາຍງານນ້ຳໜັກຢາງພາລາ ໃຫ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ເພື່ອຕິດຕາມ ແລະ ເກັບກຳຂໍ້ມູນ.

ການຕັດໄມ້ຢາງພາລາ ເພື່ອເປັນສິນຄ້າ, ຄອບຄົວ ແລະ ສາທາລະນະປະໂຫຍດ ທີ່ໄດ້ຂຶ້ນທະບຽນປ່າປູກ ຫຼື ຂຶ້ນບັນຊີຢັ້ງຢືນໄມ້ປູກ ຕາມມາດຕາ 9 ຂອງດຳລັດສະບັບນີ້, ເຈົ້າຂອງປ່າປູກຢາງພາລາ ສາມາດຕັດໄດ້ ໂດຍບໍ່ຈຳເປັນ ສຳຫຼວດ ແລະ ຂໍອະນຸຍາດ ຕາມຂັ້ນຕອນທາງດ້ານວິຊາການ ແຕ່ກ່ອນຈະຕັດນັ້ນ ຕ້ອງນຳເອົາໃບທະບຽນປ່າປູກ ຫຼື ໃບຢັ້ງຢືນໄມ້ປູກ ເພື່ອຢັ້ງຢືນກຳມະສິດ ພ້ອມທັງລາຍງານ ແລະ ແຈ້ງ ສະຖານທີ່, ຈຳນວນຕົ້ນທີ່ຈະຕັດໃຫ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເພື່ອຕິດຕາມ ແລະ ເກັບກຳຂໍ້ມູນ.

**ມາດຕາ 11 ການຊື້ ຂາຍ ຢາງພາລາ ແລະ ໄມ້ຢາງພາລາ**

ການ ຊື້ ຂາຍ ຢາງ ແລະ ໄມ້ ຢາງພາລາ ທີ່ເປັນກຳມະສິດ ຂອງບຸກຄົນ ແລະ ນິຕິບຸກຄົນ ຫຼື ການຈັດຕັ້ງນັ້ນ ເປັນຄວາມຮັບຜິດຊອບ ຂອງເຈົ້າຂອງປ່າປູກ, ໄມ້ປູກ ຫຼື ຜູ້ລົງທຶນປູກ.

ຜູ້ເກັບຊື້ ຢາງພາລາ ຕ້ອງ ໄດ້ຮັບອະນຸຍາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 37 ຂອງດຳລັດສະບັບນີ້ ແລະ ມີມາດຕະການປ້ອງກັນຜົນກະທົບຕໍ່ສິ່ງແວດລ້ອມ ໃນກໍລະນີມີ ລານຫ້ອນໂຮມຢາງພາລາ ໄດ້ອະນຸຍາດຈາກຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ທີ່ກ່ຽວຂ້ອງ.

**ມາດຕາ 12 ການເຄື່ອນຍ້າຍ ຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນ ຢາງພາລາ**

ຢາງພາລາ ແລະ ຜະລິດຕະພັນຢາງພາລາ ທີ່ໄດ້ ຊື້ ຂາຍ ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ ສາມາດເຄື່ອນຍ້າຍໄດ້ ໂດຍບໍ່ຈຳເປັນຂໍອະນຸຍາດ ແຕ່ເຈົ້າຂອງຢາງພາລາ ຕ້ອງລາຍງານ ບໍລິມາດ ຫຼື ນ້ຳໜັກຢາງພາລາ ທີ່ໄດ້ ຊື້ ຂາຍ ໃຫ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເພື່ອຕິດຕາມ ແລະ ເກັບກຳຂໍ້ມູນ.

ສຳລັບ ການເຄື່ອນຍ້າຍ ໄມ້ຢາງພາລາ ທີ່ໄດ້ຂຶ້ນທະບຽນປ່າປູກ ຫຼື ຢັ້ງຢືນໄມ້ປູກ ພາຍໃນປະເທດ ຕ້ອງລາຍງານ ສະຖານທີ່, ຈຳນວນຕົ້ນ ແລະ ບໍລິມາດ ຫຼື ນ້ຳໜັກໄມ້ ທີ່ຕັດ ໃຫ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເພື່ອຕິດຕາມ ແລະ ເກັບກຳຂໍ້ມູນ.

**ມາດຕາ 13 ມາດຕະຖານ ຜະລິດຕະພັນ ຢາງພາລາ**

ມາດຕະຖານຜະລິດຕະພັນ ຢາງພາລາ ແມ່ນ ມາດຕະຖານລວມຂອງການຜະລິດ ຊຶ່ງກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ກຳນົດ ບົນພື້ນຖານການເຊື່ອມໂຍງມາດຕະຖານ, ການກວດກາ ແລະ ການຢັ້ງຢືນກັບພາກພື້ນ ແລະ ສາກົນ.

ການຢັ້ງຢືນມາດຕະຖານຜະລິດຕະພັນຢາງພາລາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 14 ການຄົ້ນຄວ້າທົດລອງ ຢາງພາລາ**

ການຄົ້ນຄວ້າທົດລອງ ຢາງພາລາ ແມ່ນ ເພື່ອຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ໄມ້ ແລະ ຢາງພາລາ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ເປັນມິດຕໍ່ສິ່ງແວດລ້ອມ, ເປັນແຫລ່ງລາຍຮັບອັນສຳຄັນຂອງລັດ, ການຈັດຕັ້ງ ແລະ ບຸກຄົນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດດຳເນີນການສຶກສາຄົ້ນຄວ້າທົດລອງຢາງພາລາ, ລົງທຶນສ້າງສະຖາບັນ ຫຼື ສູນຄົ້ນຄວ້າທົດລອງທາງດ້ານວິຊາການ ຕາມການອະນຸຍາດຂອງຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 15 ການຄຸ້ມຄອງໂຮງງານປຸງແຕ່ງຢາງພາລາ**

ການຄຸ້ມຄອງໂຮງງານປຸງແຕ່ງຢາງພາລາ ແມ່ນການຄຸ້ມຄອງການສ້າງຕັ້ງໂຮງງານ, ການສ້າງແຜນການເຄື່ອນໄຫວກິດຈະກຳໂຮງງານ, ການຄຸ້ມຄອງ ສະຖານທີ່, ຂະບວນການຜະລິດ ແລະ ການປຸງແຕ່ງ, ການນຳເຂົ້າວັດຖຸດິບ ແລະ ຜະລິດຕະພັນ.

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ຄຸ້ມຄອງໂຮງງານປຸງແຕ່ງຢາງພາລາ ຕາມການແບ່ງຂັ້ນຄຸ້ມຄອງ.

**ມາດຕາ 16 ຄະນະກຳມະການຄຸ້ມຄອງຢາງພາລາ ຂັ້ນສູນກາງ**

ຄະນະກຳມະການຄຸ້ມຄອງຢາງພາລາ ຂັ້ນສູນກາງ ແມ່ນການຈັດຕັ້ງທີ່ບໍ່ປະຈຳການ ຊຶ່ງໄດ້ຮັບການແຕ່ງຕັ້ງໂດຍ ນາຍົກລັດຖະມົນຕີ ຕາມການສະເໜີ ຂອງລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ, ມີພາລະບົດບາດ ໃນການຄົ້ນຄວ້າ, ຊີ້ນຳ, ຊຸກຍູ້ ແລະ ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ວຽກງານຢາງພາລາ.

ສຳລັບ ສິດ, ໜ້າທີ່ ແລະ ໂຄງປະກອບ ຂອງຄະນະກຳມະການ ແມ່ນໄດ້ກຳນົດໄວ້ ໃນລະບຽບການຕ່າງຫາກ.

## ໝວດທີ 3
## ການປົກປັກຮັກສາຢາງພາລາ

**ມາດຕາ 17 ການປົກປັກຮັກສາ ຢາງພາລາ**

ການປົກປັກຮັກສາ ຢາງພາລາ ມີ ດັ່ງນີ້:

1. ການປົກປັກຮັກສາ ແຫຼ່ງແນວພັນ ຢາງພາລາ;
2. ການກັນ ແລະ ການຕ້ານ ພະຍາດໄມ້, ບົ້ງແມງ, ສັດຕູພືດ ຢາງພາລາ;
3. ການສະກັດກັ້ນ ແລະ ຕ້ານ ໄຟໄໝ້ ປ່າປູກ ຢາງພາລາ.

**ມາດຕາ 18 ການປົກປັກຮັກສາ ແຫຼ່ງແນວພັນຢາງພາລາ**

ການປົກປັກຮັກສາ ແຫຼ່ງແນວພັນຢາງພາລາ ໃຫ້ປະຕິບັດ ດັ່ງນີ້:

1. ກຳນົດລະບຽບການ ແລະ ມາດຕະການທີ່ຈຳເປັນ ໃນການປົກປັກຮັກສາແນວພັນ;
2. ໂຄສະນາເຜີຍແຜ່ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຮູ້ເຖິງຄວາມສຳຄັນ ຂອງແນວພັນ;
3. ສຳຫຼວດປະເມີນແຫຼ່ງແນວພັນ;
4. ຂຶ້ນທະບຽນແຫຼ່ງແນວພັນ;
5. ຕິດຕາມ ແລະ ປະເມີນ ຄຸນນະພາບແຫຼ່ງແນວພັນໃນແຕ່ລະໄລຍະ;
6. ສ້າງເຄືອຂ່າຍ ລະຫວ່າງຜູ້ປົກປັກຮັກສາ ແລະ ຜູ້ຊົມໃຊ້ ແນວພັນ;
7. ມີການເຄື່ອນໄຫວອື່ນທີ່ຈຳເປັນ.

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ຄຸ້ມຄອງ ແລະ ຮັບປະກັນ ແຫຼ່ງແນວພັນ.

**ມາດຕາ 19 ການກັນ ແລະ ການຕ້ານ ພະຍາດໄມ້, ບົ້ງແມງ, ສັດຕູພືດອື່ນ ຢາງພາລາ**

ການກັນ, ຕ້ານ ພະຍາດ, ບົ້ງ ແມງ ແລະ ສັດຕູພືດອື່ນ ແມ່ນ ເພື່ອປ້ອງກັນບໍ່ໃຫ້ພະຍາດ ບົ້ງ ແມງ ແລະ ສັດຕູພືດອື່ນ ເກີດຂຶ້ນ, ລະບາດ ແລະ ແກ້ໄຂ ໃຫ້ມີປະສິດທິພາບ ທັນເວລາ.

ການກັນ, ການຕ້ານ ພະຍາດ, ບົ້ງ ແມງ ແລະ ສັດຕູພືດອື່ນ ໃຫ້ປະຕິບັດ ດັ່ງນີ້:

1. ສຶກສາຂໍ້ມູນການເກີດ ແລະ ການລະບາດຂອງເຊື້ອພະຍາດ ບົ້ງ ແມງ ແລະ ສັດຕູພືດອື່ນ;
2. ຈັດຕັ້ງການປ້ອງກັນ ແລະ ຄວບຄຸມການລະບາດຂອງພະຍາດ ບົ້ງ ແມງ ແລະ ສັດຕູພືດອື່ນ ໃນເຂດປ່າປູກຂອງຕົນ;
3. ກຳນົດເຂດປອດພະຍາດ ແລະ ເຂດປ້ອງກັນ;

4. ສ້າງສູນຄົ້ນຄວ້າການກັກກັນ ແລະ ຕ້ານພະຍາດ ບົ້ງ ແມງ ແລະ ສັດຕູພືດອື່ນ, ອອກໃບຢັ້ງຢືນການຄຸ້ມຄອງການຜະລິດ, ການແຈກຢາຍ ແລະ ການນໍາໃຊ້ແນວພັນໄມ້ທີ່ປອດພະຍາດ;

5. ບໍ່ອະນຸຍາດໃຫ້ນໍາເຂົ້າ ຫຼື ເຄື່ອນຍ້າຍພັນຕົ້ນຢາງພາລາ ທີ່ມີເຊື້ອພະຍາດ ບົ້ງ ແມງ ແລະ ສັດຕູພືດອື່ນ ຢ່າງເດັດຂາດ;

6. ມີການເຄື່ອນໄຫວອື່ນທີ່ຈໍາເປັນ.

**ມາດຕາ 20 ການສະກັດກັ້ນ ແລະ ຕ້ານ ໄຟໄໝ້ ປ່າປູກຢາງພາລາ**

ການສະກັດກັ້ນ ແລະ ຕ້ານໄຟໄໝ້ ປ່າປູກຢາງພາລາ ແມ່ນ ການປ້ອງກັນປ່າປູກຢາງພາລາ ບໍ່ໃຫ້ຖືກທໍາລາຍດ້ວຍອັກຄີໄພ.

ການສະກັດກັ້ນ ແລະ ຕ້ານໄຟໄໝ້ ປ່າປູກຢາງພາລາ ໃຫ້ປະຕິບັດ ດັ່ງນີ້:

1. ກໍານົດລະບຽບການ ແລະ ມາດຕະການທີ່ຈໍາເປັນ ກ່ຽວກັບການຕິດຕາມ, ເຝົ້າລະວັງ, ສະກັດກັ້ນ ແລະ ຕ້ານໄຟໄໝ້;

2. ໂຄສະນາ ສຶກສາອົບຮົມ ໃຫ້ປະຊາຊົນ ເຫັນໄດ້ເຖິງ ສາເຫດ ແລະ ໄພອັນຕະລາຍຂອງໄຟໄໝ້ປ່າປູກຢາງພາລາ ແລະ ເປັນເຈົ້າການ ຕິດຕາມ, ເຝົ້າລະວັງ, ສະກັດກັ້ນ, ຕ້ານ ແລະ ມອດໄຟໄໝ້ປ່າປູກຢາງພາລາ ທີ່ເກີດໃນຂອບເຂດຄວາມຮັບຜິດຊອບຂອງບ້ານ;

3. ກໍານົດເຂດທີ່ມີຄວາມສ່ຽງ ເພື່ອວາງແຜນປ້ອງກັນໄຟໄໝ້ລາມປ່າປູກຢາງພາລາ ໃຫ້ທັນລະດູການ;

4. ມີການເຄື່ອນໄຫວອື່ນທີ່ຈໍາເປັນ.

## ໝວດທີ 4
## ການພັດທະນາຢາງພາລາ

**ມາດຕາ 21 ການພັດທະນາຢາງພາລາ**

ການພັດທະນາ ຢາງພາລາ ປະກອບດ້ວຍ ດັ່ງນີ້:

1. ການກໍານົດເນື້ອທີ່ດິນປູກຢາງພາລາ;
2. ການສົ່ງເສີມການປູກ ຢາງພາລາ;
3. ການພັດທະນາ ກຸ່ມຜະລິດ, ສະຫະກອນ ແລະ ສະມາຄົມຢາງພາລາ;
4. ຂໍ້ມູນ ຂ່າວສານຢາງພາລາ.

**ມາດຕາ 22 ການກໍານົດເນື້ອທີ່ດິນປູກຢາງພາລາ**

ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ແລະ ປະຊາຊົນໃນເຂດທ້ອງຖິ່ນ ທີ່ກ່ຽວຂ້ອງ ສໍາຫຼວດ ແລະ ກໍານົດເນື້ອທີ່ດິນປູກຢາງພາລາ.

ການກໍານົດເນື້ອທີ່ ປູກຢາງພາລາ ຕ້ອງເລັ່ງໃສ່ ເຂດທີ່ລັດໄດ້ຮັບຮູ້ສິດນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ແລະ ເຂດທີ່ດິນກະສິກໍາ ເຂດທີ່ໄດ້ຈັດສັນການນໍາໃຊ້ ສໍາລັບທີ່ດິນປູກຕົ້ນໄມ້ໃຫ້ໝາກ ຫຼື ພືດອາຍຸຍາວ ທີ່ໄດ້ຮັບສິດນໍາໃຊ້ທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍ.

**ມາດຕາ 23 ການສົ່ງເສີມການປູກ ຢາງພາລາ**

ລັດ ຊຸກຍູ້ ບຸກຄົນ ປູກຢາງພາລາ ໃນເຂດທີ່ລັດໄດ້ຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ແລະ ຊຸກຍູ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປູກຢາງພາລາ ໃສ່ທີ່ດິນກະສິກຳ ເຂດທີ່ໄດ້ຈັດສັນການນຳໃຊ້ ສຳລັບທີ່ດິນປູກຕົ້ນໄມ້ໃຫ້ໝາກ ຫຼື ພືດອາຍຸຍາວ ທີ່ໄດ້ຮັບສິດນຳໃຊ້ທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍ ດ້ວຍການວາງນະໂຍ ບາຍທີ່ເໝາະສົມຕໍ່ການປູກ ແລະ ການລົງທຶນປູກ.

ສຳລັບ ນະໂຍບາຍນັ້ນ ຂຶ້ນກັບເປົ້າໝາຍຂອງການປູກໄມ້ຢາງພາລາ ໃນແຕ່ລະປະເພດປ່າ ດັ່ງນີ້:

1. ການປູກໄມ້ ຢາງພາລາ ໃນເຂດທີ່ດິນ ຂອງ ບຸກຄົນ ທີ່ລັດໄດ້ຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດປ່າຜະລິດ ສາມາດຂີດ, ຕັດໄມ້, ຊື້ ຂາຍ ແລະ ເຄື່ອນ ຍ້າຍ ຢາງ ແລະ ໄມ້ ຢາງພາລາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10, 11 ແລະ 12 ຂອງດຳລັດສະບັບນີ້;

2. ການປູກໄມ້ຢາງພາລາ ໃນທີ່ດິນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃສ່ທີ່ດິນກະສິກຳ ເຂດທີ່ໄດ້ຈັດສັນການນຳໃຊ້ ສຳລັບປູກຕົ້ນໄມ້ໃຫ້ໝາກ ຫຼື ພືດອາຍຸຍາວ ທີ່ໄດ້ຮັບສິດນຳໃຊ້ທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍ ສາມາດຂີດ, ຕັດໄມ້, ຊື້ ຂາຍ ແລະ ເຄື່ອນ ຍ້າຍ ຢາງ ແລະ ໄມ້ ຢາງພາລາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10, 11 ແລະ 12 ຂອງດຳລັດສະບັບນີ້;

3. ການປູກໄມ້ ຢາງພາລາ ໃນທີ່ດິນຂອງ ບຸກຄົນ ທີ່ລັດໄດ້ຮັບຮູ້ສິດນຳໃຊ້ທີ່ດິນ ໃນປ່າປ້ອງກັນ, ປ່າສະຫງວນ ຫຼື ທີ່ດິນແຄມນ້ຳ ສາມາດຂີດ, ຊື້ຂາຍ ແລະ ເຄື່ອນຍ້າຍຢາງ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 10, 11 ແລະ 12 ຂອງດຳລັດສະບັບນີ້, ແຕ່ບໍ່ອະນຸຍາດໃຫ້ຕັດໄມ້ເພື່ອເປົ້າໝາຍທາງດ້ານການຄ້າ;

4. ອອກໃບຢັ້ງຢືນ ແລະ ສັນຍາ ການນຳໃຊ້ທີ່ດິນປ່າໄມ້ແບບມີກຳນົດ ເພື່ອໃຫ້ປະຊາຊົນປູກໄມ້ຢາງພາລາ ໃນເຂດປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ຕາມກົດໝາຍ ແລະ ລະບຽບການກຳນົດ.

**ມາດຕາ 24 ການພັດທະນາ ກຸ່ມຜະລິດ, ສະຫະກອນ ແລະ ສະມາຄົມຢາງພາລາ**

ລັດ ຊຸກຍູ້ ແລະ ສົ່ງເສີມ ການສ້າງຕັ້ງ ກຸ່ມຜະລິດ, ສະຫະກອນ ແລະ ສະມາຄົມ ຢາງພາລາ ໃຫ້ເຂັ້ມແຂງ ເພື່ອປົກປ້ອງຜົນປະໂຫຍດອັນຊອບທຳ ແລະ ສ້າງເງື່ອນໄຂ ໃນການຄຸ້ມຄອງດຳເນີນທຸລະກິດລວມໝູ່ແບບຍືນຍົງ ຕິດພັນກັບ ການສ້າງ ແລະ ພັດທະນາສີມືແຮງງານ ເປັນຕົ້ນ ດ້ານເຕັກນິກວິຊາການ, ດ້ານທຶນຮອນ, ເຂົ້າເຖິງແຫຼ່ງທຶນ, ຕະຫຼາດພາຍໃນ ພາກພື້ນ ແລະ ສາກົນ, ເຈລະຈາດ້ານການຄ້າ ໃຫ້ມີຄວາມກ້າວໜ້າທັນສະໄໝ ເພື່ອປະກອບ ສ່ວນໃນການສ້າງລາຍຮັບໃຫ້ແກ່ປະຊາຊົນ ຍົກລະດັບຊີວິດການເປັນຢູ່ໃຫ້ດີຂຶ້ນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 25 ຂໍ້ມູນ ຂ່າວສານຢາງພາລາ**

ຂໍ້ມູນ ຂ່າວສານຢາງພາລາ ແມ່ນ ເອກະສານ, ຕົວເລກ, ສະຖິຕິ, ແຜນທີ່, ພາບຖ່າຍທາງອາກາດ ແລະ ຂໍ້ມູນອື່ນ ກ່ຽວກັບຢາງພາລາ ໄດ້ເກັບຮັກສາໄວ້ໃນລະບົບຖານຂໍ້ມູນ ເພື່ອນຳໃຊ້ ສຳລັບ ການສຶກສາຄົ້ນຄວ້າ, ການກຳນົດນະໂຍບາຍ, ແຜນການ, ແຜນງານ ແລະ ໂຄງການ.

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການ ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ໃນການ ສ້າງ, ປັບປຸງ, ຄຸ້ມຄອງ, ພັດທະນາ ແລະ ນຳໃຊ້ ຖານຂໍ້ມູນ ການປູກ, ການຜະລິດ, ການປຸງແຕ່ງ, ການສົ່ງອອກ, ນຳເຂົ້າ ຢາງພາລາ ແລະ ອື່ນໆ ໂດຍເຊື່ອມຕໍ່ກັບລະບົບຂໍ້ມູນ ຂ່າວສານຢາງພາລາ ຂອງພາກພື້ນ ແລະ ສາກົນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດເຂົ້າເຖິງ ແລະ ນຳໃຊ້ຖານຂໍ້ມູນການປູກ, ການຜະລິດ, ການປຸງແຕ່ງ, ການສົ່ງອອກ, ນຳເຂົ້າ ຢາງພາລາ ແລະ ອື່ນໆ ຕາມລະບຽບການ.

# ໝວດທີ 5
# ການນຳໃຊ້, ສິດ ແລະ ພັນທະ ຂອງຜູ້ນຳໃຊ້ ຢາງພາລາ

**ມາດຕາ 26 ການນຳໃຊ້ ຢາງພາລາ ແລະ ໄມ້ ຢາງພາລາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງລັດ ທີ່ໄດ້ປູກ ຫຼື ລົງທຶນປູກ ຢາງພາລາ ສາມາດນຳໃຊ້ໄດ້ໂດຍບໍ່ຈຳເປັນຕ້ອງຂໍອະນຸຍາດ. ສຳລັບການ ຂີດ, ຕັດໄມ້, ຊື້ ຂາຍ ແລະ ເຄື່ອນ ຍ້າຍ ຢາງ ແລະ ໄມ້ ຢາງພາລາ ໃຫ້ປະຕິບັດຕາມມາດຕາ 10, 11 ແລະ 12 ຂອງດຳລັດສະບັບນີ້;

ສ່ວນຢາງພາລາ ທີ່ປູກໃນ ປ່າປ້ອງກັນ, ປ່າສະຫງວນ ຫຼື ທີ່ດິນແຄມນ້ຳ ສາມາດຂີດຢາງໄດ້ ແຕ່ບໍ່ອະນຸຍາດໃຫ້ຕັດໄມ້ ເພື່ອເປົ້າໝາຍທາງດ້ານການຄ້າ.

**ມາດຕາ 27 ສິດ ຂອງຜູ້ນຳໃຊ້ ຢາງພາລາ ແລະ ທີ່ດິນປູກ ຢາງພາລາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ ຢາງພາລາ ແລະ ທີ່ດິນປູກຢາງພາລາ ມີສິດ ດັ່ງນີ້:

1. ຄຸ້ມຄອງ ແລະ ປົກປັກຮັກສາ ຢາງພາລາທີ່ຕົນເອງປູກ ຫຼື ລົງທຶນປູກ;
2. ນຳໃຊ້ຢາງພາລາທີ່ຕົນເອງປູກ ຫຼື ລົງທຶນປູກ;
3. ໄດ້ຮັບໝາກຜົນ ເຊັ່ນ ການຂາຍໄມ້ ແລະ ຢາງພາລາ ທີ່ຕົນປູກ, ການຄ້າ ຂາຍ ກາກບອນປ່າໄມ້ ແລະ ສາມາດນຳເອົາທະບຽນ ປ່າປູກ ໄປເປັນຫຼັກຊັບຄ້ຳປະກັນ ຫຼື ເປັນຮຸ້ນໄດ້;
4. ໂອນສິດນຳໃຊ້ຢາງພາລາ ທີ່ຕົນປູກ ຫຼື ລົງທຶນປູກ;
5. ສືບທອດສິດນຳໃຊ້ ທີ່ຕົນປູກ ຫຼື ລົງທຶນປູກ.

ສຳລັບດິນປ່າໄມ້ ທີ່ລັດໄດ້ ອອກໃບຢັ້ງຢືນ ແລະ ສັນຍາ ການນຳໃຊ້ທີ່ດິນປ່າໄມ້ແບບມີກຳນົດ ບໍ່ສາມາດໂອນ ຫຼື ສືບທອດໄດ້.

**ມາດຕາ 28 ພັນທະຂອງຜູ້ນຳໃຊ້ ຢາງພາລາ**

ຜູ້ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ມີພັນທະ ດັ່ງນີ້:

1. ປະຕິບັດນະໂຍບາຍ ແລະ ກົດໝາຍ ກ່ຽວກັບວຽກງານປ່າໄມ້;
2. ປົກປັກຮັກສາປ່າໄມ້, ທີ່ດິນປ່າໄມ້, ປ່າຍອດນ້ຳ, ສິ່ງແວດລ້ອມ, ສັດນ້ຳ ແລະ ສັດປ່າ;
3. ນຳໃຊ້ທີ່ດິນປ່າໄມ້ ໃຫ້ຖືກຕ້ອງຕາມເປົ້າໝາຍ ທີ່ໄດ້ກຳນົດໃຫ້ ແລະ ຖືກຕ້ອງ ຕາມສັນຍາ ແລະ ກົດໝາຍ;
4. ເສຍຄ່າພາສີ ແລະ ອາກອນ ຕາມກົດໝາຍ;
5. ປະກອບສ່ວນ ແລະ ຂົນຂວາຍທຶນຮອນ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃນກອງທຶນສິ່ງແວດລ້ອມ ແລະ ປ່າໄມ້;
6. ໃຫ້ຂໍ້ມູນການນຳໃຊ້ຢາງ, ໄມ້ຢາງພາລາ ແລະ ທີ່ດິນປູກຢາງພາລາ, ປະສານສົມທົບ ແລະ ໃຫ້ຄວາມຮ່ວມມືກັບອົງການທີ່ກ່ຽວຂ້ອງ;
7. ນຳໃຊ້ທຸກວິທີການ ເພື່ອສະກັດກັ້ນການທຳລາຍປ່າໄມ້, ປ້ອງກັນໄຟໄໝ້ລາມປ່າ, ຂຸດຄົ້ນໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ;
8. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 6
## ທຸລະກິດ ແລະ ການດຳເນີນທຸລະກິດ ກ່ຽວກັບຢາງພາລາ

**ມາດຕາ 29 ທຸລະກິດ ກ່ຽວກັບຢາງພາລາ**

ປະເພດທຸລະກິດ ກ່ຽວກັບຢາງພາລາ ມີດັ່ງນີ້:

1. ການຜະລິດ ແນວພັນ ແລະ ເບັ້ຍ ຢາງພາລາ;
2. ການປູກໄມ້ຢາງພາລາ;
3. ການປຸງແຕ່ງຢາງພາລາ;
4. ການສົ່ງອອກ ແນວພັນ ຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນໄມ້ຢາງພາລາ;
5. ການນຳເຂົ້າ ແລະ ສົ່ງຜ່ານ ແນວພັນຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນ ຢາງພາລາ;
6. ການຄ້າ ຂາຍ ກາກບອນ ຈາກ ປ່າປູກໄມ້ຢາງພາລາ;
7. ການຄ້າ ຂາຍ ຢາງພາລາ;
8. ທຸລະກິດອື່ນກ່ຽວກັບຢາງພາລາ.

**ມາດຕາ 30 ການຜະລິດແນວພັນ ແລະ ເບັ້ຍຢາງພາລາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໄດ້ຮັບການ ສົ່ງເສີມ ການຜະລິດແນວພັນ ແລະ ເບັ້ຍຢາງພາລາ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດ.

ການພັດທະນາແນວພັນຢາງພາລາ ຕ້ອງຮັບປະກັນຄຸນນະພາບ ແລະ ມີການຢັ້ງຢືນ ຈາກ ສະຖາບັນ ຫຼື ສູນຄົ້ນຄວ້າ ກ່ຽວກັບການວິໄຈຢາງພາລາ ທີ່ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຮັບຮອງ.

**ມາດຕາ 31 ການປູກໄມ້ຢາງພາລາ**

ການປູກໄມ້ຢາງພາລາ ແມ່ນການນຳໃຊ້ ແນວພັນ ຫຼື ປັດໄຈການຜະລິດ, ເຕັກນິກວິຊາການ, ການ ບົວລະບັດປົກປັກຮັກສາ, ການປ້ອງກັນໄຟປ່າ ແລະ ພະຍາດໄມ້, ບົ້ງແມງ ເພື່ອໃຫ້ໄດ້ຮັບຜົນຜະລິດ ນ້ຳຢາງ ແລະ ໄມ້ຢາງພາລາ ທີ່ມີຄຸນນະພາບ ໃນເນື້ອທີ່ດິນ ຫຼາຍກວ່າ 20 ເຮັກຕາ ແລະ ຕ້ອງໄດ້ຂໍອະນຸຍາດ ດຳເນີນທຸລະກິດ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 37 ຂອງດຳລັດສະບັບນີ້.

ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ປູກໄມ້ຢາງພາລາ ໃສ່ເນື້ອທີ່ດິນທີ່ຕົນໄດ້ ຮັບສິດນຳໃຊ້ ຢ່າງຖືກຕ້ອງຕາມກົດໝາຍ ສາມາດດຳເນີນໄດ້ ໃນເນື້ອທີ່ 20 ເຮັກຕາ ລົງມາ ໂດຍບໍ່ຕ້ອງ ຂໍອະນຸຍາດ.

ການປູກໄມ້ຢາງພາລາ ຕ້ອງດຳເນີນໃນສະຖານທີ່ ທີ່ກຳນົດໃຫ້ ແລະ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມທີ່ ໄດ້ກຳນົດໄວ້ໃນ ມາດຕາ 22 ຂອງດຳລັດສະບັບນີ້.

**ມາດຕາ 32 ການປຸງແຕ່ງຢາງພາລາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບການສົ່ງເສີມການນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳ ເຂົ້າໃນການປຸງແຕ່ງຢາງພາລາ, ໄມ້ຢາງພາລາ ໃຫ້ສອດຄ່ອງຕາມລະບົບຄ້ຳປະກັນໄມ້ ແລະ ຜະລິດຕະພັນໄມ້ ທີ່ ຖືກຕ້ອງຕາມກົດໝາຍ ເພື່ອສ້າງມູນຄ່າເພີ່ມ ຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ ແນ່ໃສ່ຮັບປະກັນ ໃຫ້ຜະລິດຕະພັນສຳເລັດຮູບ ແລະ ເຄິ່ງສຳເລັດຮູບ ຮັບໃຊ້ພາຍໃນ ແລະ ສົ່ງອອກ ໄດ້ມາດຕະຖານ.

ການສ້າງຕັ້ງ, ການຂະຫຍາຍ ຫຼື ການຍົກຍ້າຍໂຮງງານປຸງແຕ່ງ ຢາງພາລາ, ໄມ້ຢາງພາລາ ແລະ ໂຮງງານທີ່ນຳໃຊ້ໄມ້ເປັນພະລັງງານ ຕ້ອງບົນພື້ນຖານການຮັບປະກັນດ້ານແຫຼ່ງວັດຖຸດິບ ໂດຍການອະນຸຍາດຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ.

**ມາດຕາ 33 ການສົ່ງອອກ ແນວພັນຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນ ຢາງພາລາ**

ລັດ ສົ່ງເສີມການສົ່ງອອກ ແນວພັນຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນຢາງພາລາ ເຄິ່ງສຳເລັດຮູບ, ສຳເລັດຮູບ ແຕ່ຕ້ອງໄດ້ ຂໍອະນຸຍາດຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ, ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຈາກຂະແໜງການອຸດສະຫະກຳ ແລະ ການຄ້າ ແລະ ເສຍຄ່າພັນທະ ແລະ ອາກອນ ນຳຂະແໜງການເງິນ. ສ່ວນໄມ້ຢາງພາລາ ສາມາດສົ່ງອອກເປັນທ່ອນໄດ້ ແຕ່ຕ້ອງມີໃບທະບຽນປ່າປູກຢາງພາລາ ແລະ ໃບຢັ້ງຢືນໄມ້ຢາງພາລາ.

ການສົ່ງອອກຜະລິດຕະພັນຢາງພາລາ ຕ້ອງໄດ້ຜ່ານການຢັ້ງຢືນຄຸນນະພາບ ຈາກ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕາມຂັ້ນຕອນ ແລະ ລະບຽບການ.

ການສົ່ງອອກ ແນວພັນ, ໄມ້ຢາງພາລາ ແລະ ຜະລິດຕະພັນຢາງພາລາ ເຄິ່ງສຳເລັດຮູບ ຕ້ອງປະຕິບັດຕາມກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ແລະ ຕ້ອງຜ່ານການກວດກາ ຂອງເຈົ້າໜ້າທີ່ກັກກັນພືດ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ ແລະ ເຈົ້າໜ້າທີ່ອື່ນທີ່ກ່ຽວຂ້ອງ.

ລັດ ບໍ່ອະນຸຍາດ ສົ່ງອອກ ວັດຖຸດິບ ທີ່ໄດ້ຈາກຕົ້ນຢາງ ເປັນນ້ຳຢາງສົດ ແລະ ຢາງກ້ອນຖ້ວຍ.

**ມາດຕາ 34 ການນຳເຂົ້າ ແລະ ສົ່ງຜ່ານ ແນວພັນຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນຢາງພາລາ**

ລັດ ອະນຸຍາດນຳເຂົ້າ ແນວພັນຢາງພາລາ ທີ່ບໍ່ສາມາດສະໜອງໄດ້ພາຍໃນປະເທດ ແຕ່ຕ້ອງ ມີໃບຢັ້ງຢືນແຫຼ່ງທີ່ມາຂອງແນວພັນ ຈາກປະເທດຕົ້ນທາງ ແລະ ໄດ້ຮັບອະນຸຍາດ ຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ.

ລັດ ອະນຸຍາດນຳເຂົ້າ ໄມ້ຢາງພາລາ ແລະ ຜະລິດຕະພັນຢາງພາລາ ເຄິ່ງສຳເລັດຮູບ ແລະ ສຳເລັດຮູບ ເພື່ອຕອບສະໜອງຄວາມຕ້ອງການໃນການນຳໃຊ້ພາຍໃນ ແຕ່ຕ້ອງມີໃບຢັ້ງຢືນແຫຼ່ງທີ່ມາຈາກປະເທດຕົ້ນທາງ ແລະ ໄດ້ຮັບອະນຸຍາດ ຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ. ແຕ່ຕ້ອງຜ່ານການກວດກາ ຂອງເຈົ້າໜ້າທີ່ກັກກັນພືດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ ແລະ ເຈົ້າໜ້າທີ່ອື່ນທີ່ກ່ຽວຂ້ອງ.

ລັດ ບໍ່ອະນຸຍາດນຳເຂົ້າ ນ້ຳຢາງສົດ, ຢາງກ້ອນຖ້ວຍ ມາປຸງແຕ່ງ ພາຍໃນປະເທດ ເພື່ອເປັນການສົ່ງເສີມ ການນຳໃຊ້ ຢາງພາລາ ພາຍໃນປະເທດ ໃຫ້ມີຄວາມຍືນຍົງ.

ລັດ ອະນຸຍາດນຳເຂົ້າ ອຸປະກອນຮັບໃຊ້ວຽກງານຢາງພາລາ ເປັນຕົ້ນ ເຄື່ອງມືຂີດຢາງ, ອຸປະກອນ ແລະ ກົນຈັກ ຮັບໃຊ້ການປຸງແຕ່ງ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ.

ລັດ ອະນຸຍາດ ໃຫ້ສົ່ງຜ່ານ ແນວພັນຢາງພາລາ, ຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນຢາງພາລາ ແຕ່ຕ້ອງປະຕິບັດຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກຳນົດ.

**ມາດຕາ 35 ການຄ້າ ຂາຍ ກາກບອນ ຈາກປ່າປູກໄມ້ຢາງພາລາ**

ການຄ້າຂາຍ ກາກບອນ ຈາກປ່າປູກໄມ້ຢາງພາລາ ແມ່ນການຕົກລົງກັນ ລະຫວ່າງ ຜູ້ຊື້ ທີ່ເປັນນິຕິບຸກຄົນ ຫຼື ລັດຖະບານ ທັງພາຍໃນ ແລະ ຕ່າງປະເທດ ກັບ ຜູ້ຂາຍ ທີ່ເປັນເຈົ້າຂອງໂຄງການ ກາກບອນຈາກປ່າປູກຢາງພາລາ ຕາມຫົວໜ່ວຍ ໂຕນກາກໂບນິກທຽບເທົ່າ (tCO2e) ເພື່ອທົດແທນການປ່ອຍທາດອາຍເຮືອນແກ້ວ ທີ່ຜູ້ຊື້ໄດ້ປ່ອຍສູງເກີນອັດຕາ ການອະນຸຍາດປ່ອຍ ຕາມທີ່ກຳນົດໄວ້ໃນສັນຍາປາຣີ ວ່າດ້ວຍການປ່ຽນແປງດິນຟ້າອາກາດ. ກາກບອນປ່າປູກໄມ້ຢາງພາລາ ທີ່ໄດ້ຂາຍໄປແລ້ວເປັນກຳມະສິດຂອງຜູ້ຊື້.

ສຳລັບ ການຄ້າຂາຍ ກາກບອນປ່າປູກໄມ້ຢາງພາລາ ທີ່ເກີດຈາກປ່າປູກ ເຈົ້າຂອງໂຄງການສະເໜີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ພິຈາລະນາອະນຸມັດການຄ້າຂາຍ.

**ມາດຕາ 36 ການ ຄ້າຂາຍ ຢາງພາລາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ ເກັບຊື້ ນ້ຳຢາງສົດ, ຢາງກ້ອນຖ້ວຍ ແລະ ຢາງແຜ່ນ ຕ້ອງໄດ້ຮັບການຂໍອະນຸຍາດດຳເນີນກິດຈະການກະສິກຳ ແລະ ສິ່ງແວດລ້ອມ ຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດ. ສຳລັບ ການຂາຍ ຢາງພາລາ ແມ່ນຂາຍໄດ້ທົ່ວໄປ ພາຍໃນປະເທດ ແຕ່ຕ້ອງປະຕິບັດຕາມລາຄາ ຂອງທ້ອງຖິ່ນ.

**ມາດຕາ 37 ການດຳເນີນທຸລະກິດ ກ່ຽວກັບຢາງພາລາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ດຳເນີນທຸລະກິດ ກ່ຽວກັບຢາງພາລາ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 29 ຂອງດຳລັດສະບັບນີ້ ໃຫ້ຍື່ນຄຳຮ້ອງຂຶ້ນທະບຽນວິສາຫະກິດ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ຂໍອະນຸຍາດດຳເນີນທຸລະກິດ ນຳຂະແໜງການກະສິກຳ ແລະ ສິ່ງແວດລ້ອມ.

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕ້ອງພິຈາລະນາ ໃຫ້ຄຳເຫັນ ຕາມກຳນົດເວລາ ທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 38 ເງື່ອນໄຂໃນການດຳເນີນທຸລະກິດ ກ່ຽວກັບຢາງພາລາ**

ການດຳເນີນທຸລະກິດ ກ່ຽວກັບຢາງພາລາ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ທຶນ, ສຳນັກງານ ຫຼື ສິ່ງປຸກສ້າງ, ວັດຖຸປະກອນ ແລະ ພາຫະນະຮັບໃຊ້ ທີ່ຖືກຕ້ອງ ຕາມມາດຕະຖານເຕັກນິກ;
2. ນັກວິຊາການທີ່ມີປະສົບການ ແລະ ວິຊາສະເພາະ ທີ່ກ່ຽວຂ້ອງກັບທຸລະກິດຂອງຕົນ;
3. ບົດວິພາກເສດຖະກິດ-ເຕັກນິກ;
4. ເງື່ອນໄຂອື່ນ ຕາມແຕ່ລະປະເພດທຸລະກິດ.

**ມາດຕາ 39 ການໂຈະດຳເນີນທຸລະກິດ ກ່ຽວກັບຢາງພາລາ**

ການດຳເນີນທຸລະກິດ ກ່ຽວກັບຢາງພາລາ ຈະຖືກໂຈະ ໃນກໍລະນີ ດັ່ງນີ້:

1. ຕາມການສະເໜີຂອງ ຜູ້ດຳເນີນທຸລະກິດ;
2. ຕາມການສັ່ງໂຈະ ຂອງຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເພື່ອກວດກາດ້ວຍເຫດຜົນ ດັ່ງນີ້:
   - ດຳເນີນທຸລະກິດ ບໍ່ໄປຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ;
   - ດຳເນີນທຸລະກິດ ບໍ່ຖືກຕ້ອງ ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ;
   - ສ້າງຜົນເສຍຫາຍ ຕໍ່ ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;
   - ດຳເນີນທຸລະກິດບໍ່ຕໍ່ເນື່ອງ ເປັນເວລາ ສອງປີ.

ການໂຈະການດຳເນີນທຸລະກິດ ຕ້ອງມີກຳນົດເວລາອັນແນ່ນອນ ເພື່ອຊອກຫາວິທີແກ້ໄຂ ຫຼື ປັບປຸງໃຫ້ຄືນສູ່ສະພາບປົກກະຕິ. ຖ້າຜູ້ດຳເນີນທຸລະກິດ ຫາກບໍ່ແກ້ໄຂ ຫຼື ປັບປຸງ ໃຫ້ຖືກຕ້ອງຕາມການແຈ້ງເຕືອນ ສອງຄັ້ງ, ຄັ້ງລະ ສາມສິບ ວັນ, ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ສັ່ງໂຈະ ທາງດ້ານວິຊາການ ຈົນກວ່າຜູ້ດຳເນີນທຸລະກິດແກ້ໄຂ ຫຼື ປັບປຸງ ຕາມການແຈ້ງເຕືອນ ແລະ ແຈ້ງໃຫ້ອົງການທີ່ອະນຸຍາດ ແລະ ອອກໃບທະບຽນວິສາຫະກິດ ຮັບຊາບ.

**ມາດຕາ 40 ການຍົກເລີກການດຳເນີນທຸລະກິດ ກ່ຽວກັບຢາງພາລາ**

ການດຳເນີນທຸລະກິດ ກ່ຽວກັບຢາງພາລາ ຈະຖືກຍົກເລີກ ໃນກໍລະນີ ດັ່ງນີ້:

1. ຜູ້ດຳເນີນທຸລະກິດ ສະເໜີ ຂໍຍົກເລີກ ໂດຍມີເຫດຜົນພຽງພໍ;
2. ອົງການຄຸ້ມຄອງວຽກງານຢາງພາລາ ສັ່ງໃຫ້ຍົກເລີກ ດ້ວຍເຫດຜົນ ດັ່ງນີ້:

- ຜູ້ປະກອບການລະເມີດ ກົດໝາຍ, ລະບຽບການ ກ່ຽວກັບຢາງພາລາ ແລະ ສ້າງຜົນເສຍຫາຍຢ່າງຫຼວງຫຼາຍ ຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;
- ຜູ້ປະກອບການ ຖືກສັ່ງໂຈະ ເຖິງ ສອງ ຄັ້ງຕິດຕໍ່ກັນ ໂດຍບໍ່ມີການແກ້ໄຂ ຫຼື ປັບປຸງ;
- ສານຕັດສິນ ຖອນໃບອະນຸຍາດ ຫຼື ໃຫ້ລົ້ມລະລາຍ;
- ບໍ່ດຳເນີນທຸລະກິດພາຍຫຼັງໄດ້ຮັບອະນຸຍາດ ເປັນເວລາ ສອງ ປີ.

**ມາດຕາ 41 ການສະເໜີ ຕໍ່ການໂຈະ ຫຼື ການຍົກເລີກ ການດຳເນີນທຸລະກິດ ກ່ຽວກັບຢາງພາລາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກໂຈະ ຫຼື ຍົກເລີກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 39 ແລະ 40 ຂອງດຳລັດສະບັບນີ້ ສາມາດສະເໜີ ຕໍ່ອົງການຄຸ້ມຄອງວຽກງານຢາງພາລາ ເພື່ອພິຈາລະນາການ ໂຈະ ຫຼື ຍົກເລີກຄືນ ພາຍໃນເວລາ ຊາວ ວັນ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 42 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ການນຳເຂົ້າແນວພັນເຊັ່ນ ເມັດພັນ, ເບ້ຍ ແລະ ຜົນຜະລິດຢາງພາລາ ທີ່ບໍ່ໄດ້ຮັບອະນຸຍາດ ຈາກ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ;

2. ບຸກລຸກ ແລະ ຂະຫຍາຍພື້ນທີ່ການຖືຄອງທີ່ດິນປູກຢາງພາລາ ໃນເຂດປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ;

3. ສ້າງອຸປະສັກ, ສິ່ງກີດຂວາງ ຫຼື ຂັດຂວາງໃນທຸກຮູບແບບ ຕໍ່ກັບການສົ່ງເສີມ ແລະ ພັດທະນາ ວຽກງານປຸງແຕ່ງຢາງພາລາ;

4. ອະນຸຍາດທຸກຮູບແບບ ໃຫ້ໂຮງງານ ເຄື່ອນໄຫວກິດຈະການ ທີ່ບໍ່ມີ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ຫຼື ບໍ່ລາຍງານ ກ່ຽວກັບ ການດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ທີ່ຜິດກົດໝາຍ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 43 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດຢາງພາລາ**

ຫ້າມ ຜູ້ດຳເນີນກິດຈະການວຽກງານຢາງພາລາ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ເຄື່ອນໄຫວກິດຈະການ ໂດຍບໍ່ສອດຄ່ອງກັບ ໃບອະນຸຍາດດຳເນີນກິດຈະການກະສິກຳ ແລະ ສິ່ງແວດລ້ອມ ກ່ຽວກັບຢາງພາລາ;

2. ເຄື່ອນຍ້າຍ ຢາງພາລາ ແລະ ຜະລິດຕະພັນຢາງພາລາ ທີ່ບໍ່ໄດ້ຮັບອະນຸຍາດ;

3. ເຄື່ອນຍ້າຍ ຢາງພາລາ ທີ່ບໍ່ມີການປົກຫຸ້ມພາຫະນະ ແລະ ຈອດໃນຊຸມຊົນ;

4. ສິ່ງອອກ ນ້ຳຢາງສົດ ແລະ ຢາງກ້ອນຖ້ວຍ;

5. ສ້າງຕັ້ງ, ຍົກຍ້າຍ, ດຳເນີນກິດຈະການ ແລະ ຂະຫຍາຍໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ;

6. ໃຫ້ສິນບົນແກ່ ເຈົ້າໜ້າທີ່ ແລະ ພະນັກງານ ຂອງລັດ;

7. ນຳເຂົ້າ ຫຼື ນຳໃຊ້ ທາດເຄມີອັນຕະລາຍ ໂດຍບໍ່ໄດ້ຮັບອະນຸຍາດ;

8. ຂັດຂວາງ ຫຼື ບໍ່ປະຕິບັດຕາມ ຄຳສັ່ງ ຂອງເຈົ້າໜ້າທີ່ ແລະ ພະນັກງານ ຂອງລັດ;

9. ປ່ຽນຊື່, ໂອນ, ຂາຍ, ໃຫ້ເຊົ່າ ໂຮງງານ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ;

10. ປອມແປງເອກະສານ, ປົດບັງຂໍ້ມູນຄວາມຈິງ, ຂັດຂວາງ ຫຼື ບໍ່ໃຫ້ຄວາມຮ່ວມມືແກ່ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ;

11. ປ່ອຍ ຫຼື ຖິ້ມສິ່ງເສດເຫຼືອ ທີ່ບໍ່ໄດ້ຜ່ານຂະບວນການບຳບັດ ຫຼື ບຳບັດບໍ່ໄດ້ມາດຕະຖານ ຕາມລະບຽບການ ທີ່ກ່ຽວຂ້ອງ;

12. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 44 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່**

ຫ້າມ ພະນັກງານ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ແລະ ເຈົ້າໜ້າທີ່ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ, ສົມຮູ້ຮ່ວມຄິດ, ຮັບສິນບົນ ຫຼື ມີວິທີການອື່ນທຸກຮູບແບບ;

2. ເມີນເສີຍຕໍ່ການລາຍງານ ແລະ ເປີດເຜີຍເອກະສານ ຂອງຜູ້ປະກອບການ ກ່ຽວກັບວຽກງານຢາງພາລາ;

3. ກົດໜ່ວງ, ຖ່ວງດຶງເອກະສານ ຫຼື ປອມແປງລາຍເຊັນ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ການຄຸ້ມຄອງ ແລະ ກວດກາ ວຽກງານ ຢາງພາລາ

**ມາດຕາ 45 ອົງການຄຸ້ມຄອງ ແລະ ກວດກາ ວຽກງານຢາງພາລາ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ຮັບຜິດຊອບໂດຍກົງ ໃນການຄຸ້ມຄອງ ແລະ ກວດກາ ວຽກງານຢາງພາລາ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານຢາງພາລາ ປະກອບດ້ວຍ ດັ່ງນີ້:

1. ກະຊວງກະສິກຳ ແລະ ສິ່ງແວດລ້ອມ;

2. ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ;

3. ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ.

**ມາດຕາ 46 ສິດ ແລະ ໜ້າທີ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານຢາງພາລາ ເພື່ອສະ ເໜີ ລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານຢາງພາລາ ມາເປັນ ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່, ນະໂຍບາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານຢາງພາລາ;

4. ອອກ, ລຶບລ້າງ ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ກ່ຽວກັບວຽກງານຢາງພາລາ;

5. ເກັບກໍາຂໍ້ມູນ ແລະ ສໍາຫຼວດ ສະຖິຕິ ເພື່ອສ້າງຖານຂໍ້ມູນ ການປູກ, ການຜະລິດ, ການປຸງແຕ່ງ ແລະ ການສົ່ງອອກ ຢາງພາລາ ໃນຂອບເຂດທົ່ວປະເທດ;

6. ສໍາຫຼວດ, ເຕົ້າໂຮມ, ອະນຸລັກ, ສຶກສາ ສ້າງສວນແຫຼ່ງແກ່ນພັນຢາງພາລາ, ຄັດເລືອກພໍ່ແມ່ພັນຢາງພາລາ ທີ່ເປັນບຸລິມະສິດ ແລະ ພັນຢາງພາລາ ນໍາເຂົ້າຈາກຕ່າງປະເທດ ທີ່ມີທ່າແຮງທາງດ້ານເສດຖະກິດ;

7. ຄົ້ນຄວ້າ ນໍາໃຊ້ບັນດາເຕັກໂນໂລຊີການຜະລິດທີ່ມີປະສິດທິຜົນສູງ ກ່ຽວກັບການຂະຫຍາຍແນວພັນໄມ້ຢາງ ພາລາ, ການວິໄຈຄຸນນະພາບ, ກໍານົດ ແລະ ຢັ້ງຢືນມາດຕະຖານ;

8. ເກັບກໍາຂໍ້ມູນ ແລະ ຕົວຢ່າງ ຢາງພາລາ ແລະ ໄມ້ຢາງພາລາ ຈາກປ່າປູກຢາງພາລາ ແລະ ໂຮງງານປຸງແຕ່ງ ເພື່ອກວດກາວິໄຈຄຸນນະພາບ ໃນແຕ່ລະໄລຍະ;

9. ສ້າງເຄືອຂ່າຍ ຮ່ວມມືກັບພາກລັດ, ເອກະຊົນ, ອົງການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງສາກົນ ໃນການຜະລິດແນວພັນ, ຄົ້ນຄວ້າວິໄຈຄຸນນະພາບຢາງພາລາ;

10. ຄົ້ນຄວ້າ ປະກອບຄໍາເຫັນ ກ່ຽວກັບ ການເຄື່ອນໄຫວວຽກງານສະມາຄົມຢາງພາລາ;

11. ຄົ້ນຄວ້າ ປະກອບຄໍາເຫັນການ ອອກ, ຕໍ່, ດັດແກ້, ໂຈະ, ຖອນ, ຍົກເລີກ ໃບອະນຸຍາດດໍາເນີນກິດຈະການກະສິກໍາ ແລະ ສິ່ງແວດລ້ອມ ກ່ຽວກັບຢາງພາລາ ແລະ ໃບຢັ້ງຢືນ ດໍາເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ຂະໜາດໃຫຍ່;

12. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຊຸກຍູ້, ສົ່ງເສີມ ແລະ ຕິດຕາມ, ກວດກາ ວຽກງານຢາງພາລາ ໃນຂອບເຂດທົ່ວປະເທດ;

13. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ວຽກງານຢາງພາລາ ໃຫ້ລັດຖະບານ ຮັບຊາບ ໃນແຕ່ລະໄລຍະ;

14. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 47 ສິດ ແລະ ໜ້າທີ່ ຂອງ ພະແນກກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນແຂວງ**

ພະແນກກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານຢາງພາລາ;

2. ໂຄສະນາເຜີຍແຜ່, ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນງານ, ໂຄງການ ກ່ຽວກັບວຽກງານຢາງພາລາ;

3. ອອກ, ລຶບລ້າງ ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ກ່ຽວກັບວຽກງານຢາງພາລາ;

4. ເກັບກຳຂໍ້ມູນ ແລະ ສຳຫຼວດ ຢາງພາລາ, ເກັບກຳສະຖິຕິການປູກ, ການຜະລິດ, ການປຸງແຕ່ງ ແລະ ການສົ່ງອອກ ຢາງພາລາ ໃນແຂວງຂອງຕົນ;

5. ອອກອະນຸຍາດ ເຄື່ອນຍ້າຍ ໄມ້ຢາງພາລາ ແລະ ຜະລິດຕະພັນ ຢາງພາລາ ເພື່ອສົ່ງອອກຕ່າງປະເທດ;

6. ອອກອະນຸຍາດ ການສ້າງລານທ້ອນໂຮມຢາງພາລາ ສຳລັບການຊື້ ຂາຍ;

7. ອອກ, ໂຈະ, ຖອນ ແລະ ຍົກເລີກ ໃບອະນຸຍາດ ສ້າງຕັ້ງ ກຸ່ມຜະລິດ ແລະ ສະຫະກອນ ຢາງພາລາ;

8. ຄົ້ນຄວ້າ ປະກອບຄຳເຫັນ ກ່ຽວກັບການສະເໜີ ຂໍອະນຸຍາດ ສ້າງຕັ້ງສະມາຄົມຢາງພາລາ ຂັ້ນແຂວງ;

9. ຄົ້ນຄວ້າ ແລະ ພິຈາລະນາ ອອກຂໍ້ຕົກລົງ ສ້າງຕັ້ງ ຫຼື ປະຕິເສດ ກ່ຽວກັບການສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ ຂະໜາດກາງ;

10. ຄົ້ນຄວ້າ ປະກອບຄຳເຫັນການ ອອກ, ຕໍ່, ດັດແກ້, ໂຈະ, ຖອນ ແລະ ຍົກເລີກ ໃບອະນຸຍາດດຳເນີນກິດຈະການກະສິກຳ ແລະ ສິ່ງແວດລ້ອມ ກ່ຽວກັບຢາງພາລາ ແລະ ໃບຢັ້ງຢືນ ດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ຂະໜາດກາງ;

11. ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການ ຄຸ້ມຄອງ ແລະ ຕິດຕາມ, ກວດກາ ມາດຕະຖານເຕັກນິກ, ຄວາມປອດໄພ, ສຸຂານາໄມ ແລະ ສິ່ງແວດລ້ອມ ກ່ຽວກັບວຽກງານຢາງພາລາ;

12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ວຽກງານຢາງພາລາ ໃຫ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງແຂວງ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 48 ສິດ ແລະ ໜ້າທີ່ ຂອງ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ**

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານຢາງພາລາ;

2. ໂຄສະນາ ເຜີຍແຜ່, ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນງານ, ໂຄງການ ກ່ຽວກັບວຽກງານຢາງພາລາ;

3. ເກັບກຳຂໍ້ມູນ ແລະ ສຳຫຼວດ ຢາງພາລາ, ເກັບກຳສະຖິຕິການປູກ, ການຜະລິດ, ການປຸງແຕ່ງ ຢາງພາລາ ໃນເມືອງຂອງຕົນ;

4. ອອກອະນຸຍາດ ເຄື່ອນຍ້າຍ ນ້ຳຢາງ, ຢາງກ້ອນຖ້ວຍ ແລະ ຜະລິດຕະພັນ ຢາງພາລາ ພາຍໃນປະເທດ;

5. ອອກ, ໂຈະ, ຖອນ ແລະ ຍົກເລີກ ໃບອະນຸຍາດ ສ້າງຕັ້ງ ກຸ່ມຜະລິດ ແລະ ສະຫະກອນ ຢາງພາລາ ໃນຄວາມຮັບຜິດຊອບຂອງຕົນ;

6. ຄົ້ນຄວ້າ ປະກອບຄຳເຫັນ ກ່ຽວກັບ ການສະເໜີ ຂໍອະນຸຍາດ ສ້າງຕັ້ງສະມາຄົມຢາງພາລາ ຂັ້ນເມືອງ;

7. ຄົ້ນຄວ້າ ແລະ ພິຈາລະນາ ອອກຂໍ້ຕົກລົງ ສ້າງຕັ້ງ ຫຼື ປະຕິເສດ ກ່ຽວກັບການສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ ຂະໜາດນ້ອຍ;

8. ຄົ້ນຄວ້າ ປະກອບຄຳເຫັນ ການ ອອກ, ຕໍ່, ດັດແກ້, ໂຈະ, ຖອນ ແລະ ຍົກເລີກ ໃບອະນຸຍາດດຳເນີນກິດຈະການກະສິກຳ ແລະ ສິ່ງແວດລ້ອມ ກ່ຽວກັບຢາງພາລາ ແລະ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ຂະໜາດນ້ອຍ;

9. ສົມທົບກັບບັນດາຫ້ອງການທີ່ກ່ຽວຂ້ອງ ໃນການ ຄຸ້ມຄອງ ແລະ ຕິດຕາມ, ກວດກາ ມາດຕະຖານເຕັກນິກ, ຄວາມປອດໄພ, ສຸຂານາໄມ ແລະ ສິ່ງແວດລ້ອມ ກ່ຽວກັບວຽກງານຢາງພາລາ;

10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ວຽກງານຢາງພາລາ ໃຫ້ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ແລະ ອົງການປົກຄອງເມືອງ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 49 ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ

ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ປະສານສົມທົບກັບ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ກ່ຽວກັບວຽກງານຢາງພາລາ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

### ມາດຕາ 50 ເນື້ອໃນການກວດກາ ວຽກງານຢາງພາລາ

ການກວດກາ ວຽກງານຢາງພາລາ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດນິຕິກຳ ກ່ຽວກັບຢາງພາລາ;
2. ການປະຕິບັດໜ້າທີ່ຂອງ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ກ່ຽວຂ້ອງ;
3. ການນຳໃຊ້ຢາງພາລາ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

### ມາດຕາ 51 ຮູບການການກວດກາ

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍມີການແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຊາບລ່ວງໜ້າ.

ໃນການດຳເນີນການກວດກາວຽກງານຢາງພາລາ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ 9
## ງົບປະມານ ນຳໃຊ້ໃນວຽກງານຢາງພາລາ

### ມາດຕາ 52 ແຫຼ່ງລາຍຮັບ

ແຫຼ່ງລາຍຮັບ ທີ່ນຳໃຊ້ເຂົ້າໃນວຽກງານຢາງພາລາ ມີດັ່ງນີ້:

1. ງົບປະມານແຫ່ງລັດ ຕາມການຈັດສັນງົບປະມານປະຈຳປີ;

2. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
3. ການຊ່ວຍເຫຼືອຂອງອົງການຈັດຕັ້ງ ແລະ ສະຖາບັນການເງິນ ທັງພາຍໃນ ແລະ ຕ່າງປະເທດ;
4. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 53 ການຄຸ້ມຄອງ ແລະ ການນຳໃຊ້ງົບປະມານ**

ການຄຸ້ມຄອງ ແລະ ນຳໃຊ້ງົບປະມານ ເຂົ້າໃນວຽກງານປາງພາລາ ຕ້ອງຮັບປະກັນຄວາມໂປ່ງໃສ, ສາມາດກວດສອບໄດ້ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໂດຍແມ່ນຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ຄຸ້ມຄອງ.

ງົບປະມານ ຂອງວຽກງານປາງພາລາ ໃຫ້ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ວຽກງານຄຸ້ມຄອງ, ພັດທະນາ ແລະ ນຳໃຊ້ ກ່ຽວກັບວຽກງານປາງພາລາ;
2. ການຄົ້ນຄວ້າສ້າງ ແລະ ປັບປຸງ ນິຕິກຳ ກ່ຽວກັບວຽກງານປາງພາລາ;
3. ການສ້າງລະບົບຖານຂໍ້ມູນ ແລະ ເກັບກຳສະຖິຕິ ກ່ຽວກັບວຽກງານປາງພາລາ;
4. ການພັດທະນາບຸກຄະລະກອນ ແລະ ສ້າງເຄືອຂ່າຍພັດທະນາວຽກງານປາງພາລາ;
5. ເປົ້າໝາຍອື່ນ ກ່ຽວກັບການຄຸ້ມຄອງວຽກງານປາງພາລາ.

## ໝວດທີ 10
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 54 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້ ເປັນຕົ້ນ ເປັນຕົວແບບ ການຄຸ້ມຄອງ, ພັດທະນາ ແລະ ນຳໃຊ້ ວຽກງານປາງພາລາ ແລະ ຮັກສາສິ່ງແວດລ້ອມ ຈະໄດ້ຮັບການຍ້ອງຍໍ ຕາມລະບຽບການ.

**ມາດຕາ 55 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ,ປັບໃໝ, ໃຊ້ແທນຄ່າເສຍຫາຍ ຫຼື ລົງໂທດຕາມປະມວນກົດໝາຍທາງອາຍາ ແລະ ທາງແພ່ງ ຕາມແຕ່ລະກໍລະນີ.

## ໝວດທີ 11
## ບົດບັນຍັດສຸດທ້າຍ

**ມາດຕາ 56 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການ ຈັດຕັ້ງປະຕິບັດ ດຳລັດສະບັບນີ້.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 57 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ .......ຕຸລາ 2025 ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**